# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 23 ເມສາ 2017 (4-23-2017)

# ຊີວິດໃນພຣະຄຣິດ

ແມ່ນຄຳເວົ້າຫຼືປະໂຍກໃດທີ່ສ່ວນຫຼາຍຄົນອື່ນເອົາໃຊ້ ເພື່ອບັນລະຍາຍຕົວທ່ານ?

**ຈຸດສຳຄັນໃນບົດຮຽນ**: ບຸກຄະລິກລັກສະນະຂອງພຣະຄຣິດຜູ້ຊົງເປັນຢູ່ແມ່ນພື້ນຖານຂອງຂ້ອຍ?

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ຂ້ອຍເປັນໃຜ? ສ່ວນຫຼາຍແລ້ວບໍ່ແມ່ນຄຳຖາມທີ່ງ່າຍໃນການຕອບສະເພາະເຈາະຈົງໃນທາງດຽວ. ຕົວຢ່າງ, ຂ້ອຍເປັນຜົວ, ເປັນພໍ່, ແລະກໍເປັນເພື່ອນຜູ້ນຶ່ງ. ສາຍສັມພັນທັງສາມນີ້ໄດ້ຊ່ວຍບັນລະຍາຍໃຫ້ຮູ້ຕົວຂອງຂ້ອຍ. ສິ່ງທີ່ແນ່ນອນນັ້ນກໍຄືວ່າການບັນລະຍາຍແລະເຫັນຕົວຂ້ອຍເອງ ບຸກຄະລິກຂອງຂ້ອຍເອງຈະສະທ້ອນຕໍ່ຄວາມຄິດແລະການກະທຳຂອງຂ້ອຍ.

ລະບົບຂອງຊາວໂລກເຂົ້າໃຈຕໍ່ຄວາມເປັນຈິງອັນນີ້, ນັ້ນຄືເຫດຜົນທີ່ມັນພະຍາຍາມຫຼອມພວກເຮົາໃຫ້ເຫັນຕົວພວກເຮົາຢ່າງໃດ. ພວກນັກໂຄສະນາກໍຕ້ອງການທີ່ຈະໃຫ້ພວກເຮົາໄດ້ເຫັນຕົວພວກເຮົາເອງໃນທາງທີ່ສະເພາະເຈາະຈົງທາງໃດທາງນຶ່ງ ແລະຫຼັງຈາກນັ້ນກໍເຊື່ອໃນສິນຄ້າຂອງພວກເຂົາເພື່ອໃຫ້ໄດ້ໃຊ້ເພີ້ມຂຶ້ນຕາມພາບພົດທີ່ເຫັນນັ້ນ.

ຜົນສະທ້ອນອັນແທ້ຈິງຕໍ່ບຸກຄະລິກຂອງພວກເຮົານັ້ນກໍຄືການທີ່ພວກເຮົາເຫັນພຣະເຢຊູວ່າເປັນແນວໃດ. ໃນຂ່າວປະເສີດລູກາ, ພຣະເຢຊູໄດ້ຖາມພວກສາວົກຂອງພຣະອົງ, "ພວກທ່ານຄິດວ່າເຮົາແມ່ນຜູ້ໃດ?" ການທີ່ພວກຜູ້ຊາຍເຫຼົ່ານີ້ໄດ້ເຫັນພຣະເຢຊູໄດ້ປ່ຽນແປງຊີວິດຂອງເຂົາເຈົ້າເພາະວ່າມັນປ່ຽນວິທີການທີ່ເຂົາເຈົ້າໄດ້ເຫັນຕົວຂອງເຂົາເຈົ້າເອງ.

ຄວາມຈິງແລ້ວມັນກໍເໝືອນກັນສຳລັບພວກເຮົາ. ການທີ່ພວກເຮົາເຫັນພຣະເຢຊູກໍຫຼໍ່ຫຼອມໃຫ້ພວກເຮົາເຫັນຕົວຂອງພວກເຮົາວ່າເປັນຢ່າງໃດ. ປາສຈາກການເຂົ້າໃຈຢ່າງຖືກຕ້ອງວ່າພຣະເຢຊູແມ່ນຜູ້ໃດ, ພວກເຮົາຈະບໍ່ເຂົ້າໃຈຢ່າງຖືກຕ້ອງວ່າພວກເຮົາແມ່ນໃຜກັນແທ້. ຢາກສເນີດັ່ງນີ້, ຄຳຖາມສຳຄັນທີ່ສຸດຂອງຊີວິດ: ພຣະເຢຊູແມ່ນຜູ້ໃດ?

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ລູກາ 9:18-20</u>**

*18.ຢູ່ມາເມື່ອພຣະອົງກຳລັງໄຫວ້ວອນຢູ່ໃນບ່ອນຕ່າງຫາກ ມີແຕ່ພວກສາວົກຢູ່ນຳພຣະອົງຊົງຖາມເຂົາວ່າ, "ປະຊາຊົນເວົ້າກັນວ່າເຮົາແມ່ນຜູ້ໃດ?" 19. ພວກສາວົກທູນຕອບວ່າ, "ເຂົາວ່າແມ່ນໂຢຮັນບັບຕິສະໂຕ ລາງຄົນວ່າແມ່ນເອລີຢາ ແຕ່ຄົນອື່ນວ່າແມ່ນຜູ້ປະກາດພຣະທັມແຕ່ເຊັ່ນບູຮານກັບເປັນຄືນມາອີກ" 20. ແລ້ວພຣະອົງຊົງຖາມເຂົາວ່າ, "ຝ່າຍພວກທ່ານເດ ວ່າເຮົາແມ່ນຜູ້ໃດ?" ເປໂຕທູນຕອບວ່າ, "ແມ່ນພຣະຄຣິດມາແຕ່ພຣະເຈົ້າ."*

ໃນຊ່ວງເວລາອັນສັ້ນໆທີ່ພວກສາວົກໄດ້ຢູ່ກັບພຣະເຢຊູ, ເຂົາເຈົ້າໄດ້ເຫັນພຣະອົງເຮັດການອັສຈັນຫຼາຍຢ່າງ ລ້ຽງເກືອພວກອຶດຫິວ; ເຮັດໃຫ້ຄົນຄືນມາຈາກຕາຍ; ປິ່ນປົວຄົນເປັ້ຽລ່ອຍ, ຄົນຕາບອດ, ແລະຄົນເປັນພະຍາດ; ແລະອື່ນໆ

ອີກ. ພຣະເຢຊູໄດ້ເລີ່ມຈາກຊ່າງໄມ້ໃນເມືອງນ້ອຍໆແຫ່ງນຶ່ງທີ່ບໍ່ມີຊື່ສຽງໃນແຂວງຄາລີເລຈົນເຖິງເມືອງໃຫຍ່ທີ່ສຸດທີ່ມີຊື່ສຽງໃນເຂດປາລິສຕິນ. ຝູງຊົນຢ່າງຫຼວງຫຼາຍຮັກພຣະອົງ. ແຕ່ກໍມີຄົນຫຼວງຫຼາຍກຽດຊັງພຣະອົງ. (ເບິ່ງເໝືອນວ່າບໍ່ມີການປ່ຽນແປງຫຍັງຫຼາຍໃນຊ່ວງລະຍະ 2000 ກວ່າປີທີ່ຜ່ານມາ!)

ການສົນທະນາທີ່ພວກເຮົາສຶກສາຢູ່ໃນລູກາ 9 ໄດ້ເກີດຂຶ້ນທີ່"ເຂດເມືອງກາຊາເຣັຽຟີລິບປອຍ" (ມັດທາຍ 16:13), ຊຶ່ງເປັນສະຖານທີ່ຮັບໃຊ້ຝ່າຍຈິດວິນຍານແລະເປັນສູນກາງສາສນາເປັນເວລາຫລາຍພັນປີມາແລ້ວ. ໃນສະຖານທີ່ນັ້ນເຮັດໃຫ້ມີການເຂົ້າໃຈຜິດແລະສັບສົນເລື່ອງຂອງຈິດວິນຍານ, ພຣະເຢຊູໄດ້ຖາມພວກສາວົກຂອງພຣະອົງວ່າ, "ປະຊາຊົນເວົ້າກັນວ່າເຮົາແມ່ນຜູ້ໃດ?" ເຂົາເຈົ້າໄດ້ຕອບດ້ວຍຄວາມຄິດເຫັນທີ່ແຕກຕ່າງກັນຂອງຝູງຊົນກ່ຽວກັບບຸກຄະລິກຂອງພຣະເຢຊູ. ຄວາມຄິດເຫັນຂອງເຂົາເຈົ້າແຕກຕ່າງກັນ, ແຕ່ວ່າມີສິ່ງນຶ່ງທີ່ເປັນເອກກະສັນກັນນັ້ນກໍຄື: ພຣະເຢຊູແມ່ນຜູ້ນຶ່ງທີ່ມີຄວາມສຳຄັນ.

ພວກເຮົາໄດ້ຍິນຄຳຕອບທີ່ຄ້າຍຄືກັນໃນທຸກມື້ນີ້. ສຳລັບເພື່ອນບ້ານຂອງທ່ານທີ່ເປັນມຸສລິມ, ພຣະເຢຊູແມ່ນຜູ້ປະກາດພຣະທັມ. ສຳລັບເພື່ອນມິດຂອງທ່ານທີ່ເປັນຊາວພຸດ, ເພິ່ນເປັນຄຣູສອນທີ່ຮູ້ແຈ້ງເຫັນຈິງ. ແມ້ກະທັ້ງພວກທີ່ບໍ່ເຊື່ອວ່າມີພຣະເຈົ້າກໍເວົ້າວ່າພຣະເຢຊູເປັນຄົນແຫ່ງການດົນຈິດໃຈ. ທັງໝົດນີ້ລ້ວນແຕ່ເປັນໜ້າສົນໃຈ, ແຕ່ວ່າຄຳຖາມອັນແທ້ຈິງ ພຣະເຢຊູຈະຖາມພວກເຮົາແຕ່ລະຄົນ ແມ່ນຄຳຖາມທີ່ພຣະອົງໄດ້ຖາມພວກສາວົກຂອງພຣະອົງວ່າ:"ຝ່າຍພວກທ່ານເດ ວ່າເຮົາແມ່ນຜູ້ໃດ?"

ທ່ານເປໂຕໄດ້ຮັບຮູ້ວ່າພຣະເຢຊູແມ່ນພຣະຄຣິດທີ່ຄອງຄອຍມາແຕ່ດົນນານແລ້ວການເປີດເຜີຍອັນນັ້ນໄດ້ປ່ຽນແປງຄວາມເຂົ້າໃຈຂອງທ່ານເປໂຕໃຫ້ຮູ້ຕົວເພິ່ນເອງແລະປ່ຽນແປງອະນາຄົດຂອງເພິ່ນອີກດ້ວຍ. ເມື່ອທ່ານເປໂຕໄດ້ເຂົ້າໃຈຢ່າງຖືກຕ້ອງວ່າພຣະເຢຊູແມ່ນຜູ້ໃດເທົ່ານັ້ນແຫຼະ ທ່ານກໍສາມາດຈັດລຳດັບຊີວິດແລະເຫັນບຸກຄະລິກຂອງຕົນຢ່າງຖືກຕ້ອງ.

| ແມ່ນຄຳເວົ້າຫຼືປະໂຍກໃດທີ່ຄົນໄດ້ໃຊ້ບັນລະຍາຍເຖິງພຣະເຢຊູໃນປັດຈຸບັນນີ້. |
|---|

## 2. <u>ລູກາ 9:21-22</u>

*21. ພຣະອົງຈຶ່ງຊົງສັ່ງຫ້າມເຂົາຢ່າງແຂງແຮງ ບໍ່ໃຫ້ບອກຄວາມນີ້ແກ່ຜູ້ໃດ. 22. ແລ້ວຊົງກ່າວວ່າ, "ບຸດມະນຸດຈະຕ້ອງທົນທຸກທໍຣະມານຫຼາຍປະການ ພວກເຖົ້າແກ່ກັບພວກປະໂຣຫິດຕົນໃຫຍ່ ແລະພວກນັກທັມຈະບໍ່ຍອມຮັບທ່ານ ເຂົາຈະໄດ້ຂ້າທ່ານເສັຽ ແລ້ວໃນວັນຖ້ວນສາມທ່ານຈະຖືກຊົງບັນດານໃຫ້ຄືນມາອີກ"*

| ທ່ານມີຄວາມຮູ້ສຶກແນວໃດຖ້າວ່າທ່ານໄດ້ຍິນຄຳສັ່ງຂອງພຣະເຢຊູເໝືອນກັບວ່າທ່ານເປັນສາວົກຜູ້ນຶ່ງຂອງພຣະອົງ? |
|---|

ເປໂຕຮູ້ຈັກພຣະເຢຊູຢ່າງຖືກຕ້ອງ. ເຖິງປານນັ້ນ, ກໍຍັງເປັນການປລາດໃຈທີ່ພຣະເຢຊູໄດ້ບອກເປໂຕແລະພວກສາວົກຄົນອື່ນໆວ່າຄວນເຮັດແນວໃດກັບຂໍ້ມູນນັ້ນ. ພຣະອົງໄດ້ບອກເຂົາເຈົ້າວ່າຢ່າບອກຜູ້ໃດ.

ແມ່ນຫຍັງກັນນີ້? ບໍ່ແມ່ນພວກເຮົາຖືກເອີ້ນໃຫ້ປ່າວປະກາດວ່າພຣະເຢຊູຄືພຣະຜູ້ຊ່ວຍໃຫ້ພົ້ນບໍ່? ແມ່ນແລ້ວ, ແລະຕໍ່ມາພຣະເຢຊູໄດ້ມອບພຣະມະຫາບັນຊາໃຫ້ແກ່ສາວົກພວກດຽວກັນນີ້ແຫຼະໃຫ້ເປັນພະຍານຂອງພຣະອົງ ໃຫ້ບອກທຸກໆຄົນກ່ຽວເລື່ອງພຣະເຢຊູ (ເບິ່ງ ກິຈການ 1:8). ໂດຍສະເພາະແລ້ວ,ໃນຂະນະນັ້ນເອງ, ພຣະເຢຊູບໍ່ຕ້ອງການປະກາດຄວາມຈິງຢ່າງເຕັມປ່ຽມກ່ຽວກັບຕົວເອງເທື່ອ.

ພຣະເຢຊູມີນັດໝາຍກັບຄວາມຕາຍທີ່ຕົງກັບເວລາ ແລະພຣະອົງຈະບໍ່ຕາຍກ່ອນເວລາກຳນົດ, ຄຳວ່າຜູ້ໂຜດໃຫ້ພົ້ນໄດ້ກາຍມາເປັນຄຳສັບຂອງພວກການເມືອງຢ່າງສົມບູນ. ຫຼາຍຄົນອາດຈະເປັນນັກປະຕິວັດທີ່ເຫັນຕົວພວກເຂົາເອງວ່າເປັນ "ຜູ້ໂຜດໃຫ້ພົ້ນ" ຂະນະທີ່ຫຼາຍໆຄົນຍັງລໍຄອຍພຣະຜູ້ໂຜດໃຫ້ພົ້ນຢ່າງຈິດຈໍ່, ບາງຄົນໄດ້ເຫັນວ່າ "ພຣະຄຣິດ" ຄືເປັນເລື່ອງທີ່ໜ້າຢ້ານກົວ. ຖ້າຫາກວ່າພວກສາວົກໄດ້ອອກປະກາດເຫດການໃໝ່ອັນນີ້ກ່ຽວເລື່ອງພຣະເຢຊູ, ຄວາມ

ຄາດໝາຍຂອງພວກການເມືອງ ຫຼືຍ້ານຝູງປະຊາຊົນຈະກີດຂວາງພຣະອົງຕໍ່ການອອກທ່ອງທ່ຽວໄປມາຢ່າງເສຣີພາບໃນການປະກາດຂ່າວປະເສີດເຣື່ອງຂອງພຣະເຈົ້າ (ມລກ 1:14).

ອີກຢ່າງນຶ່ງເວລາກໍານົດທີ່ຈະເປີດເຜີຍວ່າພຣະເຢຊູແມ່ນພຣະຄຣິດນັ້ນຍັງບໍ່ທັນມາເຖິງເທື່ອ ໃນຂະນະນັ້ນພວກສາວົກອາດຈະມີຄວາມເຊື່ອຄືກັນກັບພວກຊາວຢິວທັງໝົດທີ່ວ່າ ພຣະຜູ້ໂຜດໃຫ້ພົ້ນຈະຕ້ອງເປັນຜູ້ນໍາດ້ານການເມືອງທີ່ຈະປົດປ່ອຍເຂົາເຈົ້າໃຫ້ອອກຈາກການກົດຂີ່ຂົ່ມເຫັງຂອງພວກຈັກກະພັດໂຣມັນ ຫຼືຊັຍຊະນະດ້ານການທະຫານຢ່າງໃດຢ່າງນຶ່ງ.

ຜູ້ນໍາດ້ານການເມືອງຜູ້ໃດກໍຕາມກໍຕ້ອງຫວັງພົບກັບການຕໍ່ຕ້ານແລະຄວາມຕາຍ, ແຕ່ວ່າພຣະເຢຊູບໍ່ໄດ້ພຽງແຕ່ພົບກັບຄວາມຕາຍເທົ່ານັ້ນ; ພຣະອົງໄດ້ບອກພວກເຂົາເຈົ້າວ່າພຣະອົງຈະຟື້ນຄືນມາອີກ. ພຣະອົງໄດ້ບອກໄວ້ລ່ວງໜ້າກ່ອນເຫດການຈະເກີດຂຶ້ນເພື່ອເຂົາເຈົ້າຈະບໍ່ປລາດໃຈ (ກຈກ 2:23-24).

## 3. <u>ລູກາ 9:23-26</u>

*23. ແລ້ວພຣະອົງຊົງກ່າວກັບເຂົາທັງຫຼາຍວ່າ, "ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽແລະຮັບແບກໄມ້ກາງແຂນຂອງຕົນທຸກວັນແລ້ວຕິດຕາມເຮົາມາ. 24. ເພາະວ່າຜູ້ໃດຢາກຊ່ອຍຊີວິດຂອງຕົນເພາະເຫັນແກ່ເຮົາ ຜູ້ນັ້ນກໍຈະມີຊີວິດພົ້ນ. 25. ເຫດວ່າ ຖ້າຜູ້ໃດຈະໄດ້ສິ່ງຂອງໝົດທັງໂລກ ແຕ່ຈະເຮັດໃຫ້ຕົວເອງຈິບຫາຍຫຼືເສັຽໄປ ຜູ້ນັ້ນຈະໄດ້ປໂຍດອັນໃດ. 26. ດ້ວຍວ່າຖ້າຜູ້ໃດມີຄວາມລະອາຍເພາະເຮົາ ແລະເພາະຖ້ອຍຄໍາຂອງເຮົາ ບຸດມະນຸດກໍຈະມີຄວາມລະອາຍເພາະຜູ້ນັ້ນ ເມື່ອທ່ານມາດ້ວຍສະງ່າຣາສີຂອງຕົນ ຂອງພຣະບິດາ ແລະຂອງພວກເທວະດາບໍຣິສຸດ*

ຫຼັງຈາກທີ່ໄດ້ຍິນຂ່າວເຣື່ອງການນັດພົບກັບຄວາມຕາຍຈາກເບື້ອງເທິງຂອງພຣະເຢຊູ, ພວກສາວົກກໍຫັນໃຈຍັງບໍ່ຕິດເທື່ອ. ພຣະເຢຊູກໍໄດ້ບອກພວກເຂົາເຈົ້າເອງ. ລູກາ 9:23 ຊຶ່ງເປັນພຣະຄໍາຂໍ້ສໍາຄັນຂໍ້ນຶ່ງສໍາລັບພວກທີ່ຕິດຕາມພຣະເຢຊູ. ພວກເຮົາຈະບໍ່ສາມາດເຂົ້າໃຈຕົວເຮົາເອງຈົນກວ່າພວກເຮົາເຂົ້າໃຈວ່າພຣະຄໍາຂໍ້ນີ້ໝາຍຄວາມວ່າແນວໃດຕໍ່ຊີວິດຂອງພວກເຮົາ. ຖ້າວ່າພວກເຮົາຢາກອ້າງຕົວເຮົາເອງວ່າເປັນຜູ້ຕິດຕາມພຣະຄຣິດ, ພວກເຮົາກໍຕ້ອງເວົ້າວ່າ "ແມ່ນແລ້ວ" ກັບພຣະເຢຊູ, ຊຶ່ງໝາຍຄວາມວ່າເຮົາຕ້ອງບອກວ່າ "ບໍ່" ກັບຕົວເຮົາເອງ. ພວກເຮົາຕ້ອງຮັບແບກໄມ້ກາງແຂນແລະຕາຍຕໍ່ຕົວພວກເຮົາເອງທຸກໆວັນ. ທຸກໆມື້ພວກເຮົາຈະບອກວ່າ "ບໍ່" ຕໍ່ຄວາມຕ້ອງການ, ຄວາມປາຖນາ, ຄວາມໄຝ່ຝັນຂອງພວກເຮົາເອງ, ແລະພວກເຮົາຕ້ອງເວົ້າວ່າ "ແມ່ນແລ້ວ" ຕໍ່ຄວາມເປັນພຣະຄຣິດເໜືອຊີວິດຂອງພວກເຮົາ.

ທັງໝົດທີ່ໄດ້ກ່າວມານີ້ແມ່ນສິ່ງທີ່ຍາກຕໍ່ການເຮັດໃນສັງຄົມປັດຈຸບັນນີ້. ເປັນດ້ວຍເຫດໃດ? ເພາະວ່າພວກເຮົາຢູ່ໃນໂລກທີ່ຂົນຂວາຍໃສ່ແຕ່ຕົວເອງ. ໂດຍມາຕະຖານຂອງໂລກນີ້, ທຸກໆຄົນແມ່ນຢູ່ໃນໂລກເພື່ອພວກເຂົາເອງ ແລະທຸກໆ ຄົນກໍາລັງຈົມລົງ!

| |
|---|
| ເຮົາເຫັນຫຍັງແດ່ຕໍ່ການລົງມືປະຕິບັດທີ່ຈະປະຕິເສດພວກເຮົາເອງ? ຮັບແບກໄມ້ກາງແຂນທຸກວັນ? |

- ການຈົມລົງໃນສາຍສັມພັນທີ່ແຕກຫັກ ເພາະວ່າທຸກໆ ສິ່ງທີ່ລາວຮຽກຮ້ອງແມ່ນແນໃສ່ລາວເອງເປັນສູນກາງ.
- ການຈົມລົງໃນໜີ້ສິນ ເພາະວ່າຜູ້ນັ້ນຢາກໄດ້ໝົດທຸກອັນ.
- ການຈົມລົງໃນຄວາມເຈັບປ່ອຍແລະພະຍາດແຊກແຊງ ເພາະວ່າພວກເຂົາຕ້ອງກິນທຸກຢ່າງແລະປະສົບການກັບທຸກສິ່ງ.

ມີຈັກເທື່ອແລ້ວທີ່ທ່ານໄດ້ເຫັນຄົນທີ່ເຮັດວຽກໃນບ່ອນທີ່ເຂົາຊັງເພື່ອຊື້ສິ່ງຂອງທີ່ເຂົາບໍ່ຕ້ອງການເພື່ອຈະໄດ້ອວດອ້າງຕໍ່ຄົນທີ່ເຂົາບໍ່ມັກ? ມີຈັກເທື່ອແລ້ວດ້ວຍຕົວທ່ານເອງທີ່ເຂົ້າຢູ່ໃນວົງວຽນແນວນີ້? ພຣະເຢຊູຮຽກເອີ້ນພວກເຮົາໃຫ້ເປັນຄົນທີ່ແຕກຕ່າງ.

ພຣະເຢຊູຮຽກເອີ້ນພວກເຮົາໃຫ້ຕັດສິນໃຈກ່ຽວເຣື່ອງພຣະອົງ. ແຕ່ວ່າບໍ່ສາມາດເປັນການຕັດສິນໃຈເປັນຄວາມລັບ. ບໍ່ມີຜູ້ໃດເປັນຄຣິສຕຽນແລະເກັບຮັກສາຄວາມເຊື່ອຂອງລາວໄວ້ຢ່າງປົດລັບໄດ້ຢ່າງຊື່ນເຊີງ ພຣະເຢຊູປະສົງໃຫ້ພວກທີ່ຕິດຕາມພຣະອົງມີຄວາມຈິງຮັກພັກດີຕໍ່ພຣະອົງ, ໃຫ້ຕາຍຕໍ່ຕົວເອງ, ແລະໃຫ້ປະກາດຄວາມເຊື່ອຂອງເຂົາເຈົ້າໃນພຣະອົງຕໍ່ສາທາຣະນະ: "ດ້ວຍວ່າຖ້າຜູ້ໃດມີຄວາມລະອາຍເພາະເຮົາ ແລະເພາະຖ້ອຍຄຳຂອງເຮົາ ບຸດມະນຸດກໍຈະມີຄວາມລະອາຍເພາະຜູ້ນັ້ນ ເມື່ອທ່ານມາດ້ວຍສະງ່າຣາສີຂອງຕົນ ຂອງພຣະບິດາ ແລະຂອງພວກເທວະດາບໍຣິສຸດ"

| |
|---|
| ພວກເຮົາສາມາດຊ່ວຍຊຶ່ງກັນແລະກັນໃຫ້ເຊື່ອຟັງຄຳແນະນຳຂອງພຣະເຢຊູໃນຂໍ້ນີ້ໄດ້ຢ່າງໃດ? |

ພວກເຮົາຕ້ອງເຂົ້າໃຈວ່າພຣະເຢຊູຄືຜູ້ໃດເພື່ອວ່າພວກເຮົາຈະສາມາດເຂົ້າໃຈວ່າເຮົາແມ່ນຜູ້ໃດ. ບຸກຄະລິກຂອງພວກເຮົາໄດ້ຖືກສ້າງຂຶ້ນເທິງພື້ນຖານຂອງບຸກຄະລິກຂອງພຣະອົງ. ເມື່ອພວກເຮົາໄດ້ຕິດຕໍ່ສົມພັນແລ້ວ, ການຕັດສິນໃຈຂອງພວກເຮົາແມ່ນຕິດຕາມພຣະເຢຊູ ແລະຕິດຕາມພຣະອົງທຸກໆວັນ ສິ່ງອື່ນໆອີກແມ່ນໄດ້ຖືກປ່ຽນແປງ.

## ນຳໃຊ້ໃນຊີວິດ

ພຣະເຢຊູແມ່ນພຣະຄຣິດ, ພຣະບຸດຂອງພຣະເຈົ້າ. ທ່ານຈະຕອບໂຕ້ຢ່າງໃດກັບຄວາມຈິງອັນນີ້ໃນວັນຂ້າງໜ້າ? ຈົ່ງເບິ່ງຄຳແນະນຳຂ້າງລຸ່ມນີ້:

**ຄົ້ນຄວ້າ.** ໃຊ້ເວລາອ່ານຫຼັກຄວາມເຊື່ອຂອງໂບດທ່ານ. (ຖ້າມີເວັບໄຊຂອງໂບດກໍໃຫ້ເລີ່ມທີ່ນັ້ນຫຼືກັບພະນັກງານຂອງໂບດ.) ແມ່ນຫຍັງຄືຄວາມຈິງສະເພາະເຈາະຈົງຕ່າງໆທີ່ສອນທ່ານກ່ຽວກັບພຣະເຢຊູ?

**ຍອມຈຳນົນ.** ໃຫ້ກ່າວວ່າ "ແມ່ນແລ້ວ" ພຣະເຢຊູຄືພຣະຜູ້ເປັນເຈົ້າໝາຍເຖິງຕ້ອງກ່າວວ່າ "ບໍ່" ຕໍ່ຕົວເອງ. ຕ້ອງພິຈາຣະນາຕົວເອງແລະຍອມຈຳນົນທຸກໆ ດ້ານຂອງການເຫັນແກ່ຕົວໃຫ້ກັບພຣະອົງ.

**ແບ່ງປັນ.** ພວກເຮົາໄດ້ຖືກຮຽກເອີ້ນໃຫ້ບອກທຸກໆຄົນວ່າພຣະເຢຊູແມ່ນຜູ້ໃດ. ຄິດຫາຄົນທີ່ທ່ານຮູ້ຈັກທີ່ຕ້ອງການພຣະເຢຊູ. ອະທິຖານອ້ອນວອນຮ່ວມກຸ່ມເພື່ອຄົນຜູ້ນັ້ນໃຫ້ມາຮູ້ຈັກກັບພຣະເຢຊູ, ແລະອະທິຖານກ່ຽວກັບຕົວທ່ານໃນຂັ້ນຕອນຂອງການແບ່ງປັນຄຳພະຍານຂອງທ່ານ, ເຊື້ອເຊີນຄົນນັ້ນໄປໂບດ, ຕອບຄຳຖາມຕ່າງໆ, ແລະອື່ນໆອີກ.

ທ່ານແມ່ນໃຜ? ນັ້ນແມ່ນຄຳຖາມທີ່ໜ້າສົນໃຈ. ເປັນຄຳຖາມທີ່ສຳຄັນ. ແຕ່ວ່າທ່ານຈະບໍ່ສາມາດຊອກຫາຄຳຕອບທີ່ດີທີ່ສຸດບໍ່ໄດ້ນອກຈາກການເຂົ້າໃຈວ່າບຸກຄະລິກຂອງທ່ານແມ່ນກ່ຽວພັນກັບຂອງພຣະຄຣິດໂດຍຕົງ

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA**